# ບົດກ່າວຕ້ອນຮັບ

**ໂດຍທ່ານ ວິດົງ ໄຊຍະສອນ, ເລຂາພັກແຂວງ, ເຈົ້າແຂວງ ແຂວງວຽງຈັນ**
**ໃນກອງປະຊຸມໂຕະມົນຂັ້ນແຂວງ ກ່ຽວກັບ ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາ**
**ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020) ເພື່ອນຳພາປະເທດຫຼຸດ**
**ພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາ**
**ແບບຍືນຍົງ**
**ທີ່ແຂວງ ວຽງຈັນ, ວັນທີ 25 ພະຈິກ 2016**

---

ຮຽນ:

- ພະນະ ທ່ານ. ສົມດີ ດວງດີ ຮອງນາຍົກລັດຖະມົນຕີ. ລັດຖະມົນຕີ ກະຊວງການເງິນ ທີ່ເຄົາລົບນັບຖືຢ່າງສູງ,
- ທ່ານ ດຣ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ທີ່ເຄົາລົບ
- ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ, ທີ່ນັບຖື
- ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈຳລາວ
- ບັນດາທ່ານ ທູຕານຸທູດ, ຜູ້ຕາງຫນ້າອົງການຈັດຕັ້ງສາກົນ ແລະບັນດາຄູ່ຮ່ວມພັດທະນາ ທີ່ຮັກແພງ
- ຜູ້ຕາງໜ້າຈາກບັນດາກະຊວງຂະແໜງການ ແລະພະແນກການຕ່າງໆຂອງແຂວງ ວຽງຈັນ ແລະບັນດາຜູ້ຕາງໜ້າຈາກບັນດາແຂວງຕ່າງໆ

ຂ້າພະເຈົ້າ ຕາງໜ້າໃຫ້ແຂວງ ວຽງຈັນ ກໍ່ຄື ຄະນະນຳພັກ-ລັດ ແຂວງ, ອຳນາດການປົກຄອງ ແລະປະຊາຊົນ ແຂວງວຽງຈັນ, ຂໍສະແດງຄວາມຮູ້ສຶກພາກພູມໃຈ ແລະເປັນກຽດຢ່າງສູງທີ່ ລັດຖະບານ ກໍ່ຄື ກະຊວງແຜນການ ແລະການລົງທຶນ, **ຄູ່ຮ່ວມພັດທະນາ** ແລະອົງການ ສະຫະປະຊາຊາດ (ສປຊ) ເພື່ອການພັດທະນາ ຮ່ວມກັບ ແຂວງວຽງຈັນໄດ້ເປັນເຈົ້າພາບໃນການຈັດກອງປະຊຸມໂຕະມົນ **ປະຈຳປີ 2016.**

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ແລະເປັນກຽດຢ່າງສູງ ທີ່ໄດ້ຕ້ອນຮັບ ພະນະທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການເງິນ, ທ່ານ ດຣ. ສຸພັນ ແກ້ວມີໄຊ ລັດຖະມົນຕີກະຊວງແຜນການ ແລະການລົງທຶນ, ທ່ານ ນາງ ຄາຣິນາ ອິມໂມເນັນ, **ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈຳລາວ**, ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ, ບັນດາທ່ານທູຕານຸທູດ, ຜູ້ຕາງໜ້າອົງ ການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ, ບັນດາທ່ານຫົວໜ້າກົມ/ຮອງກົມ ແລະຜູ້ແທນ

ຈາກ ນະຄອນຫຼວງວຽງຈັນ ແລະ 16 ແຂວງ ທີ່ໄດ້ສະຫຼະເວລາອັນມີຄ່າ ແລະໃຫ້ກຽດມາຮ່ວມກອງປະຊຸມໂຕະມົນຂັ້ນແຂວງໃນຄັ້ງນີ້.

ການມາຮ່ວມຂອງ ພະນະທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການເງິນ, ທ່ານ ດຣ. ສຸພັນ ແກ້ວມີໄຊ ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ, ທ່ານຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈໍາ ສປປ ລາວ ແລະບັນດາຄູ່ຮ່ວມພັດທະນາ ໃນຄັ້ງນີ້ ແມ່ນສະແດງເຖິງຄວາມເອົາໃຈໃສ່, ຄວາມເປັນຫ່ວງເປັນໃຍຂອງ ລັດຖະບານ ກໍ່ຄື ບັນດາຄູ່ຮ່ວມພັດທະນາ ຕໍ່ການສ້າງສາພັດທະນາ ກໍ່ຄືການປຸກລະດົມຊຸກຍູ້ແນວຄິດຈິດໃຈ ຂອງ **ທຸກພາກສ່ວນທີ່ມີສ່ວນຮ່ວມຕໍ່ການພັດທະນາ** ແລະປະຊາຊົນ**ບັນດາເຜົ່າ** ໃນ ສປປ ລາວ ເວົ້າລວມ, ເວົ້າສະເພາະກໍ່ຄື ແຂວງວຽງຈັນ ຂອງພວກຂ້າພະເຈົ້າ.

**(ຂໍເຊີນເຊີຍ)**

**ບັນດາທ່ານທີ່ນັບຖື,**

ໂດຍລວມແລ້ວ, ແຂວງວຽງຈັນ ແມ່ນເຂດທີ່ມີຄວາມອຸດົມສົມບູນ ດ້ວຍຊັບພະຍາກອນທໍາມະຊາດ, ມີພູມສັນຖານທີ່ແຕກຕ່າງ ແລະເປັນເອກະລັກສະເພາະ, ທັງມີທ່າແຮງດ້ານການພັດທະນາອຸດສາຫະກໍາ ແລະການຄ້າ, ກະສິກໍາ, ແຮງງານ, **ດ້ານການເຊື່ອມໂຍງ ແລະ ເຊື່ອມຈອດຕາມແລວທາງເສດຖະກິດ** ແຕ່ທ່າແຮງດັ່ງກ່າວຍັງບໍ່ທັນໄດ້ຖືກຂຸດຄົ້ນ ແລະນໍາໃຊ້ໃຫ້ມີປະສິດທິຜົນຕາມຄວາມສາມາດຕົວຈິງເທົ່າທີ່ຄວນ, ເປັນສາເຫດໃຫ້ບາດກ້າວການຂະຫຍາຍຕົວ ໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ຍັງບໍ່ຂະຫຍາຍຕົວເທົ່າທີ່ຄວນ ເພາະປະຊາກອນສ່ວນໃຫຍ່ ແມ່ນຍັງອາໄສຮູບແບບການດໍາລົງຊີວິດໂດຍອາໄສທໍາມະຊາດເປັນຫລັກ ແລະຊອກຢູ່ຫາກິນແບບ ເພິ່ງຕົນເອງກຸ້ມຕົນເອງ ເປັນສ່ວນຫລາຍ. ເວົ້າລວມແລ້ວ, ລະດັບການພັດທະນາຂອງແຂວງແມ່ນຍັງຊັກຊ້າ ແລະມີການຫລຸດໂຕນກັນຫລາຍ ເມື່ອທຽບກັບຈັງຫວະການພັດທະນາ. ໂດຍຈາກຂໍ້ມູນດ້ານສະຖິຕິຂອງແຂວງ ສາມາດຊີ້ໃຫ້ເຫັນໄດ້ວ່າ ຈໍານວນຄອບຄົວທຸກຍາກຢູ່ແຂວງມີປະມານ 1.033 ຄອບຄົວ ແລະປະມານ 10 ບ້ານ ຂອງຈໍານວນບ້ານຢູ່ແຂວງ ແມ່ນຍັງຖືກຈັດເປັນບ້ານທຸກຍາກ.

ແຂວງວຽງຈັນ ເປັນແຂວງໜຶ່ງໃນ 6 ແຂວງພາກກາງ ຂອງ ສປປ ລາວ, ມີເນື້ອທີ່ທັງໝົດ 15.927 ກິໂລຕາແມັດ, ມີພົນລະເມືອງທັງໝົດປະມານ 442.159 ຄົນ ອີງໃສ່ສະຖິຕິ ໃນປີ 2016 ແລະປະກອບມີ 11 ເມືອງຄື: ເມືອງວຽງຄໍາ, ເມືອໂພນໂຮງ, ເມືອງແກ້ວອຸດົມ, ເມືອງທຸລະຄົມ, ເມືອງຫີນເຫີບ, ເມືອງວັງວຽງ, ເມືອງກາສີ, ເມືອງແມດ, ເມືອງໝື່ນ, ເມືອງເຟືອງ ແລະເມືອງຊະນະຄາມ.

ໂດຍການຊີ້ນໍາ-ນໍາພາຂອງພັກ ແລະລັດຖະບານ ໂດຍແມ່ນຄະນະພັກແຂວງ, ອໍານາດການປົກຄອງທຸກຂັ້ນ, ກໍ່ຄືການສະຫນັບສະຫນູນດ້ານທຶນຮອນ ແລະວິຊາການ ຈາກລັດຖະບານ ແລະຄູ່ຮ່ວມພັດທະນາ ຈຶ່ງເຮັດໃຫ້ ແຂວງວຽງຈັນ ໄດ້ຮັບການພັດທະນາທີ່ດີຂຶ້ນເປັນເທື່ອລະກ້າວ ໂດຍສະ

ເພາະ ແມ່ນທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ. ວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນ ໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນເທື່ອລະກ້າວເຊິ່ງສະແດງອອກຄື:

- ກ່ອນອື່ນໝົດ ແມ່ນສາມາດເຮັດໃຫ້ແຂວງວຽງຈັນ ເປັນແຂວງທີ່ມີສະຖຽນລະພາບ ທາງດ້ານການ ເມືອງ, ສັງຄົມມີຄວາມສະຫງົບ.
- ເສດຖະກິດຂະຫຍາຍຕົວຕໍ່ເນື່ອງໃນລະດັບ 8,17 ເປີເຊັນ ຕໍ່ປີ, ສະເລ່ຍລາຍຮັບຕໍ່ຫົວຄົນສຳລັບປີ 2015-2016 ແມ່ນ 13,410,000 ກີບ ຫຼືເທົ່າກັບ 1.660 ໂດລາສະຫະລັດ.
- ການຜະລິດເປັນສິນຄ້າ ໄດ້ຮັບການຂະຫຍາຍຕົວ ເຊັ່ນ: ສາມາດຜະລິດເຂົ້າເປືອກໄດ້ 294.834 ໂຕນ, ສະເລ່ຍໃສ່ພົນລະເມືອງໄດ້ຮັບ 666 ກລ/ຄົນ/ປີ, ຄໍ້າປະກັນສະບຽງອາຫານໄດ້ 152.600 ໂຕນ ອັດຕາສະເລ່ຍ 350 ກລ/ຄົນ/ປີ ຫຼື 180 ກລ ເຂົ້າສານ/ຄົນ/ປີ (ຖືວ່າບັນລຸໄດ້ດ້ານໂພສະນາການ). ຜະລິດພືດໄດ້ 387.000 ໂຕນ, ຮັບປະກັນສະບຽງອາຫານໄດ້ 43.620 ໂຕນ, ຮັບປະກັນໄດ້ 100ກລ/ຄົນ/ປີ ຫຼື 200 ກຣ/ຄົນ/ວັນ, ຖືວ່າຮັບປະກັນໄດ້ໂດຍພື້ນຖານ. ຜະລິດ ຊີ້ນ, ປາ, ໄຂ່ ໄດ້ 25.300 ໂຕນ, ສະເລ່ຍໄດ້ 57 ກລ/ຄົນ/ປີ, ຄໍ້າປະກັນສະບຽງອາຫານໄດ້ 15.260 ໂຕນ, ສະເລ່ຍຮັບປະກັນໄດ້ 35 ກລ/ຄົນ/ປີ.
- ວຽກງານການປັບປຸງພື້ນຖານໂຄງລ່າງໄດ້ຮັບການປັບປຸງ , ໂດຍໄດ້ຂະຫຍາຍຕາຂ່າຍໄຟຟ້າໄປເຖິງທຸກເມືອງ ແລະເຂດຊົນນະບົດ. ໄດ້ກໍ່ສ້າງ ແລະຍົກລະດັບເສັ້ນທາງເທດສະບານແຂວງ, ເມືອງ ແລະເສັ້ນທາງຊົນນະບົດ
- ວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ມາຮອດປັດຈຸບັນ ໄດ້ລຶບລ້າງຄວາມທຸກຍາກໄດ້ 178 ຄອບຄົວ, ແລະຍັງມີຄອບຄົວທຸກຍາກ 1,033 ຄອບຄົວ ໂດຍກວມເອົາ 1,27 ເປີເຊັນ ຂອງຄອບຄົວໃນທົ່ວແຂວງ.
- ໂດຍອີງໃສ່ການຊີ້ນຳ-ນຳພາຂອງອຳນາດການປົກຄອງແຂວງ ກໍ່ໄດ້ເອົາໃຈໃສ່ຕໍ່ວຽກງານ 3 ສ້າງ ຊຶ່ງໄດ້ຮັບຮອງເອົາເມືອງວັງວຽງ ແລະເມືອງໝື່ນ ເປັນເມືອງທົດລອງວຽກງານດັ່ງກ່າວ.
- ວຽກງານດ້ານການສຶກສາ, ຈຳນວນເດັກນ້ອຍທີ່ເຂົ້າໂຮງຮຽນ ມີອາຍຸສະເລ່ຍ 3-5 ປີ ແມ່ນກວມເອົາ 51,8 ເປີເຊັນ, ອັດຕາຄົນຮູ້ໜັງສືສະເລ່ຍ ອາຍຸ 15 ຂຶ້ນໄປ ສາມາດບັນລຸໄດ້ 99,8 ເປີເຊັນ.

***ບັນດາທ່ານ ແຂກຜູ້ມີກຽດ,***
***ທ່ານ ຍິງ ທ່ານ ຊາຍ,***

ຄຽງຄູ່ກັບສະພາບຄວາມຄືບໜ້າດັ່ງກ່າວ ກໍ່ບໍ່ປາສະຈາກໄດ້ ສະພາບຄວາມຫຍຸ້ງຍາກທີ່ເປັນຜົນກະທົບ ຕໍ່ການພັດທະນາ ເສດຖະກິດ-ສັງຄົມ ຂອງແຂວງວຽງຈັນ ໂດຍສະເພາະ ແມ່ນບັນຫາທີ່ກ່ຽວພັນກັບວຽກງານການຮັບປະກັນຄວາມໝັ້ນຄົງທາງອາຫານ ແລະໂພຊະນາການ, ແຂວງໄດ້ປະສານ

ສົມທົບ ກັບກະຊວງສາທາລະນະສຸກ ເພື່ອຈັດຕັ້ງປະຕິບັດວຽກງານການສົ່ງເສີມດ້ານໂພສະນາການ ໂດຍໄດ້ປະຕິບັດໂຄງການໃຫ້ອາຫານເສີມແກ່ເດັກ ນ້ອຍລຸ່ມ 5 ປີລົງມາ ໃນ 28 ບ້ານຂອງເມືອງເຟືອງ , ໃນຈຳນວນເດັກຂາດສານອາຫານທັງໝົດ 989 ຄົນນັ້ນ ໄດ້ມີເດັກຈຳນວນ 904 ຄົນທີ່ໄດ້ກິນອາຫານເສີມ. ຢູ່ເມືອງແມດປະຕິບັດໄດ້ 18 ບ້ານ, ຊຶ່ງມີເດັກຂາດສານຈຳນວນທັງໝົດ 561 ຄົນ ແລະໄດ້ເຂົ້າມາກິນອາຫານເສີມຄົບໝົດທຸກຄົນ. ບັນຫາສ່ວນໃຫຍ່ທີ່ພົບເຫັນໃນເດັກຂາດສານອາຫານ ແມ່ນເດັກຈ່ອຍຜ່ອມ ແລະນໍ້າໜັກຫຼຸດ. ດັ່ງນັ້ນ, ຂ້າພະເຈົ້າເຊື່ອໝັ້ນວ່າ ກອງປະຊຸມຄັ້ງນີ້ ຈະເປັນກາລະໂອກາດ ທີ່ເອື້ອອຳນວຍ, ເປັນເວທີສຳຄັນໃນການປຶກສາຫາລືຊອກຫາຊ່ອງທາງ ໃນການລະດົມທຶນຮອນ ແລະກຳນົດມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອແນໃສ່ເຮັດໃຫ້ປະຊາຊົນໃນ ສປປ ລາວ ເວົ້າລວມ, ເວົ້າສະເພາະ ໃນແຂວງວຽງຈັນ ມີສະພາບການດຳລົງຊີວິດທີ່ດີຂຶ້ນ ແລະສາມາດຫລຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

ໃນໄລຍະເວລາທີ່ບັນດາທ່ານເຂົ້າຮ່ວມກອງປະຊຸມ ກໍ່ຄືໃນການເຄື່ອນໄຫວ ແລະພັກເຊົາຢູ່ແຂວງ ວຽງຈັນນີ້, ກໍ່ບໍ່ສາມາດຫຼີກລ້ຽງໄດ້ ຂໍ້ຂາດຕົກບົກຜ່ອງທີ່ຈະເກີດຂຶ້ນ, ຍ້ອນຄວາມຫຍຸ້ງຍາກຂາດເຂີນ ແລະຄວາມບໍ່ຊິນເຄີຍ, ບໍ່ມີບົດຮຽນ, ຫວັງຢ່າງຍິ່ງວ່າ ທ່ານຜູ້ແທນກອງປະຊຸມ ຄົງຈະໃຫ້ອາໄພ ແກ່ພວກຂ້າພະເຈົ້າດ້ວຍ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ພະນະທ່ານ ສົມດີ ດວງດີ ຮອງນາຍົກລັດຖະ ມົນຕີ ລັດຖະມົນຕີກະຊວງການເງິນ, ຄະນະປະທານກອງປະຊຸມ, ບັນດາທ່ານຜູ້ແທນກອງປະຊຸມທຸກທ່ານ ຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກ ແລະພ້ອມກັນດຳເນີນກອງປະຊຸມ ໃຫ້ສຳເລັດຕາມຈຸດປະສົງ ລະດັບຄາດໝາຍທີ່ວາງໄວ້.

**ຂໍຂອບໃຈ**